**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມຊັບສິນທາງປັນຍາ

ເລກທີ 0973/ກຊປ

ນະຄອນຫຼວງວຽງຈັນ, ວັນທີ 26 JUN 2023

# ແຈ້ງການ

**ເຖິງ:** ບັນດາ ບໍລິສັດຕົວແທນ ຂໍຈົດທະບຽນ ຊັບສິນທາງປັນຍາ.

**ເລື່ອງ:** ການຍົກເລີກຄັດຕິດໃບທະບຽນສານ ເພື່ອຢັ້ງຢືນຄວາມຖືກຕ້ອງໃນການມອບສິດ ທີ່ເປັນຕົ້ນສະບັບ.

- ອີງຕາມ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ສະບັບເລກທີ 38/ສພຊ, ລົງວັນທີ 15 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 0440/ອຄ, ຂໍ້ຕົກລົງ ສະບັບເລກທີ 0438/ອຄ, ອີງຕາມ ຂໍ້ຕົກລົງ ສະບັບເລກທີ 0436/ອຄ, ຂໍ້ຕົກລົງ ສະບັບເລກທີ 0435/ອຄ, ຂໍ້ຕົກລົງ ສະບັບເລກທີ 0434/ອຄ, ລົງວັນທີ 30 ມີນາ 2023.

ກົມຊັບສິນທາງປັນຍາ, ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ອີງໃສ່ຂໍ້ຕົກລົງຕ່າງໆ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ www.dip.gov.la ຊຶ່ງໄດ້ມີການຍົກເລີກການຮຽກຮ້ອງເອົາໃບທະບຽນສານ ເພື່ອຢັ້ງຢືນໃນການມອບສິດ ສຳລັບການຍື່ນໃບມອບສິດທີ່ເປັນຕົ້ນສະບັບ ເພື່ອເປັນການອຳນວຍຄວາມສະດວກ ພ້ອມທັງເປັນການປັບປຸງຂອດຂັ້ນໃນການຍື່ນຄຳຮ້ອງ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງກັບການຈົດທະບຽນ ນຳກົມຊັບສິນທາງປັນຍາ. ສະນັ້ນ, ການຍື່ນເອກະສານເພີ່ມເຕີມ ເຊັ່ນ: **ໃບມອບສິດ (Power of Attorney), ໜັງສືຢັ້ງຢືນການຖືສິດ (Deed of Inventorship), ໜັງສືຢັ້ງຢືນການໂອນສິດ (Assignment), ໜັງສືຢັ້ງຢືນການອະນຸຍາດນຳໃຊ້ (Licensing), ໜັງສືຢັ້ງຢືນການປ່ຽນຊື່ ແລະ/ຫຼື ທີ່ຢູ່ (Declaration of Change)** ທີ່ເປັນຕົ້ນສະບັບແມ່ນບໍ່ຈຳເປັນຕ້ອງມີໃບຢັ້ງຢືນທະບຽນສານ ໃນການມອບສິດດັ່ງກ່າວ, ບັນດາ ບໍລິສັດຕົວແທນ ຂໍຈົດທະບຽນ ຊັບສິນທາງປັນຍາ ໃນການຍື່ນໃບມອບສິດທີ່ເປັນຕົ້ນສະບັບດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍກ່ຽວກັບຄວາມແທ້ຈິງຂອງເອກະສານໃນການມອບສິດ, ໃນກໍລະນີມີຂໍ້ສົງໄສ ກົມຊັບສິນທາງປັນຍາ ຈະທວງຖາມ ຫຼື ໃຫ້ດຳເນີນການ ຢັ້ງຢືນ ຕາມແຕ່ລະກໍລະນີ ໃນການມອບສິດນັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ສົມຕິສຸກ ພູມສະຫວັດ



REDMI NOTE 11

**LAO PEOPLE'S DEMOCRATIC REPUBLIC**
**Peace - Independence - Democracy - Unity - Prosperity**

**Ministry of Industry and Commerce**
Department of Intellectual Property

No.0973/MOIC-DIP
Vientiane Capital, 26 June 2023

# NOTIFICATION LETTER

To: Intellectual Property Representatives

Subject: Revocation of submission of notarized document to verify the authenticity of the original document.

- Pursuant to the Intellectual Property Law No. 38/NA, dated 15/11/2017;
- Pursuant to the Decision No. 0440/KH, Decision No. 0438/KH, Decision No. 0436/KH, Decision No. 0435/KH, Decision No. 0434/KH, dated March 30, 2023.

The Department of Intellectual Property would like to inform you that, according to the agreements on the registration of industrial property and the facilitation, improvement of the procedures for application and submitting of other documents relating to registration. The Department of Intellectual Property decided to revoke request for certification/notarization on the original documents such as Power of Attorney, Deed of Inventorship, Assignment, Licensing, Declaration of Change of Name and/or Address, etc. The intellectual property representatives from now on will only require the original document submission and the representatives must be responsible before the law regarding the authenticity of these documents. In case of doubt, the Department of Intellectual Property will ask or verify each case according to the competence

Therefore, we would like to inform you to acknowledge and implement strictly.

Department of Intellectual Property
Deputy Director
(Signed and Sealed)

Mr. Santisouk Phounsavath